# ເພື່ອທີ່ຈະຮູ້ຈັກພຣະເຈົ້າ



ບົດຮຽນທີ 2 ສຳລັບ ວັນທີ11 ເມສາ, 2026



“ນີ້ແມ່ນຊີວິດນິຣັນ
ດອນ ຄືໃຫ້ພວກ
ເຂົາຮູ້ຈັກພຣະອົງ
ຜູ້ເປັນພຣະເຈົ້າທ່ຽງ
ແທ້ແຕ່ອົງດຽວ
ແລະຮູ້ຈັກພຣະເຢຊູ
ຄຣິດເຈົ້າຜູ້ທີ່ພຣະ
ອົງໃຊ້ມາ.”
ໂຢຮັນ 17:3

ຄວາມເຂົ້າໃຈຂອງພວກເຮົາກ່ຽວກັບພຣະເຈົ້າ ໄດ້ຖືກເຊື່ອມຊາມລົງຍ້ອນຄວາມບາບ. ພວກເຮົາໄດ້ພະຍາຍາມສະແດງພຣະອົງເປັນດັ່ງຮູບເຄົາລົບ ບໍ່ວ່າຈະເປັນຮູບສັດ ຫລື ທີ່ຖືກສ້າງຂຶ້ນຕາມໃຈມະນຸດ. ພຣະອົງຊົງຖືກພັນລະນາວ່າເປັນພຣະເຈົ້າທີ່ມີອາລົມເອົາແຕ່ໃຈ ຫລື ຜະເດັດການ. ໃນທີ່ສຸດແລ້ວ, ມະນຸດໄດ້ສ້າງຮູບເຄົາລົບທີ່ມີລັກສະນະຄ້າຍຄືຕົນເອງ

ແລ້ວພຣະເຈົ້າຊົງມີລັກສະນະແບບໃດແທ້? ພຣະອົງຊົງຍິ່ງໃຫຍ່ເກີນກວ່າທີ່ພວກເຮົາຈະເຂົ້າໃຈພຣະອົງໄດ້ບໍ? ແນ່ນອນ, ບໍ່ວ່າພວກເຮົາຈະພະຍາຍາມຫລາຍປານໃດກໍ່ຕາມ, ຄວາມຄິດຂອງພວກເຮົາບໍ່ສາມດເຂົ້າໃຈພຣະອົງໄດ້. ພວກເຮົາຕ້ອງການຄວາມຊ່ວຍເຫລືອ

ແຕ່ວ່າການຊ່ວຍເຫລືອນັ້ນໄດ້ມາເຖິງແລ້ວ. ພວກເຮົາຕ້ອງການທີ່ຈະຮູ້ວ່າພຣະອົງມີລັກສະນະແບບໃດບໍ່? ໃນພຣະຄຳພີ, ພວກເຮົາໄດ້ເຫັນການເປີດເຜີຍຂອງພຣະເຈົ້າຜ່ານທາງທຳມະຊາດ





- ຄຸນລັກສະນະຂອງພຣະເຈົ້າ
- ລັກສະນະນິໄສຂອງພຣະເຈົ້າ
  - ພຣະເຈົ້າຊົງບໍຣິສຸດ
  - ພຣະເຈົ້າແມ່ນຄວາມຮັກ
- ການທີ່ຈະຮູ້ຈັກພຣະເຈົ້າ
  - ພຣະອົງຊົງເປີດເຜີຍຜ່ານການຊົງສ້າງ
  - ພຣະອົງຊົງເປີດເຜີຍຜ່ານພຣະເຢຊູ(ເອມານູເອນ)



# ຄຸນລັກສະນະ
# ຂອງພຣະເຈົ້າ

“ພຣະເຈົ້າຢາເວ ພຣະເຈົ້າອົງຊົງຣິດອຳນາດຍິ່ງໃຫຍ່ເອີຍ ບໍ່ມີຜູ້ໃດທີ່ມີອຳນາດຍິ່ງໃຫຍ່ດັ່ງພຣະອົງໄດ້.
ພຣະເຈົ້າຢາເວເອີຍ ພຣະອົງຊົງສັດຊື່ ໃນສັບພະທຸກສິ່ງ.”
ເພງສັນລະເສີນ 89:8

## ຄຸນລັກສະນະ ຂອງພຣະເຈົ້າ

ພຣະຄຳພີໄດ້ສະແດງໃຫ້ພວກເຮົາເຫັນພຣະສາຍາອັນທ່ຽງແທ້ ແລະ ສັດຊື່ ຂອງພຣະອົງ ຢ່າງຊັດເຈນແລະ ສອດຄ້ອງກັນຢ່າງທີ່ສຸດ. ໜຶ່ງໃນນັ້ນພຣະອົງ ໄດ້ເປີດເຜີຍພຣະອົງໃຫ້ພວກເຮົາຮູ້ເຖິງລັກສະນະຂອງພຣະອົງ

### ລັກສະນະບາງຢ່າງຂອງພຣະເຈົ້າ

- ຊົງຣິດອຳນາດຍິ່ງໃຫຍ່ (ປຖມກ 17:1)
- ຊົງຮູ້ທຸກໆສິ່ງ (1 ຢຮ 3:20)
- ຊົງຮູ້ອະນາຄົດ (ອຊຢ 46:10)
- ເຮັດຖືກຕ້ອງແລະເຮັດການດີ (ພສລສ 11:7)
- ຊົງເມດຕາ (ພບຍສ 4:31)
- ຊົງອົດທົນ ແລະ ເປັນຜູ້ຊູໃຈ (ຣມ 15:5)
- ຜູ້ໃຫ້ພຣະຄຸນ (ຣມ 3:24)
- ເປັນຜູ້ໃຫ້ອະໄພ (ພສສ 86:5)
- ຍິ່ງໃຫຍ່ (ພສສ 47:8)
- ຊົງດຳຣົງຊົ່ວນິຣັນດອນ (ປຖມກ 21:33)



ສຳລັບຊາຕານແລ້ວ ມັນ ພະຍາຍາມທີ່ຈະບິດເບືອນຄຸນ ລັກສະນະຂອງພຣະເຈົ້າວ່າ ເປັນພຣະເຈົ້າຜູ້ຊົງເຫັນແກ່ໂຕ, ຜູ້ຊົງສະແຫວງຫາແຕ່ສິ່ງດີໆ ໃຫ້ຕົນເອງ (ປຖມກ. 3:4-5).



# ລັກສະນະນິໄສ
# ຂອງພຣະເຈົ້າ

“ເສຣາຟິມເຫຼົ່ານີ້ເອີ້ນໃສ່ກັນແລະກັນວ່າ, “ບໍຣິສຸດ ບໍຣິສຸດ ບໍຣິສຸດ ພຣະເຈົ້າຢາເວອົງຊົງຣິດອຳນາດຍິ່ງໃຫຍ່ຊົງບໍຣິສຸດ ພຣະສະຫງ່າຣາສີກໍແຜ່ກະຈາຍໄປທົ່ວໂລກ.”” ເອຊາຢາ 6:3

# ພຣະອົງຊົງບໍຣິສຸດ

ເທວະດາຜູ້ຢູ່ໃກ້ຊິດກັບພຣະເຈົ້າຮ້ອງເພງສັນລະເສີນພຣະອົງວ່າ “ບໍຣິສຸດ, ບໍຣິສຸດ, ບໍຣິສຸດ” (ອຊຢ 6:3; ພນມ 4:8). ຄຸນລັກສະນະນີ້ແມ່ນເຊື່ອມໂຍງກັນກັບລັກສະນະນິໄສເນື້ອແທ້ທີ່ທ່ານ ເອຊາຢາ ໃຊ້ແທນພຣະນາມຂອງພຣະເຈົ້າ: “ພຣະເຈົ້າອົງບໍຣິສຸດ”. (ອຊຢ 40:25; 57:15).

ການດຳຣົງຢູ່ແບບບໍຣິສຸດໝາຍຄວາມວ່າແນວໃດ? ມັນໝາຍຄວາມວ່າພວກເຮົາຕ້ອງໄດ້ອຸທິດຕົນ, ແຍກອອກຈາກຄວາມບາບ ແລະ ຖືກຊຳຣະໃຫ້ບໍຣິສຸດ. ພວກເຮົາບໍຣິສຸດຕອນທີ່ພວກເຮົາຫັນຫຼັງໃຫ້ກັບຄວາມຊົ່ວ ແລະ ເຮັດວຽກງານທີ່ໄດ້ຮັບມອບໝາຍໃຫ້ຈາກພຣະເຈົ້າ. (ຈຊບຊ 15:40; ລບລວ 11:44; 1 ປຕ 2:9).

ແລ້ວພຣະເຈົ້າເດ? ພຣະອົງນັ້ນຊົງບໍຣິສຸດຢູ່ແລ້ວ ເພາະພຣະອົງບໍ່ໄດ້ເຮັດບາບ ແລະ ບໍ່ມີສ່ວນກ່ຽວຂ້ອງກັບຄວາມບາບເລີຍ

ນີ້ໝາຍຄວາມວ່າ, ພຣະອົງຊົງບໍຣິສຸດ, ຄວາມຮັກຂອງພຣະອົງຈຶ່ງບໍຣິສຸດ, ສັກສິດ, ແລະບໍ່ເຫັນແກ່ໂຕ. ເພາະວ່າພຣະອົງຊົງບໍຣິສຸດ, ອຳນາດຂອງພຣະອົງຈຶ່ງສັກສິດ, ບໍຣິສຸດ, ບໍ່ມີສິ່ງເຈືອປົນ, ແລະບໍ່ມີຄວາມເຫັນແກ່ໂຕ. ຄຸນລັກສະນະທັງໝົດຂອງພຣະອົງນັ້ນ ແມ່ນຈະຊືມຊັບເຂົ້າກັບຄວາມບໍຣິສຸດ ແລະ ຄວາມສັກສິດ



# ພຣະເຈົ້າຊົງເປັນຄວາມຮັກ

"ຝ່າຍເຮົາທັງຫລາຍໄດ້ຮູ້ຈັກ ແລະໄດ້ເຊື່ອໃນຄວາມຮັກທີ່ພຣະເຈົ້າໄດ້ຊົງມີຕໍ່ພວກເຮົາ ພຣະເຈົ້າຊົງເປັນຄວາມຮັກ ຜູ້ໃດທີ່ຕັ້ງຢູ່ໃນຄວາມຮັກ ກໍຢູ່ໃນພຣະເຈົ້າ ແລະພຣະເຈົ້າກໍຊົງສະຖິດຢູ່ໃນຜູ້ນັ້ນ." 1 ໂຢຮັນ 4:16

ພຣະເຈົ້າບໍ່ໄດ້ມີແຕ່ຄວາມຮັກ ຫລື ຖ່າຍທອດຄວາມຮັກຂອງພຣະອົງອອກມາເທົ່ານັ້ນ (ແມ້ວ່າພຣະອົງຊົງເຮັດທັງສອງຢ່າງ), ແຕ່ວ່າ "ພຣະອົງຊົງເປັນຄວາມຮັກ" (1 ຢຮ 4:8, 16). ເຊັ່ນດຽວກັນກັບຄວາມບໍຣິສຸດ, ຄວາມຮັກ ແມ່ນເນື້ອແທ້ຂອງຄວາມສັກສິດຂອງພຣະເຈົ້າ



ຍ້ອນຄວາມຮັກ, ພຣະອົງຊົງສ້າງຜູ້ຊາຍ ແລະ ຜູ້ຍິງ ແລະ "ສັ່ງ" ພວກເຂົາ ໃຫ້ຮັກເຊິ່ງກັນແລະກັນ (ປຖມກ 2:24)



ຍ້ອນຄວາມຮັກ, ເມື່ອອາດາມ ແລະ ເອວາ ໄດ້ເຮັດບາບ ພຣະອົງກໍ່ຊອກຫາພວກເຂົາ ແລະ ມອບຄວາມຫວັງໃຫ້ພວກເຂົາ (ປຖມກ 3:9, 15)



ຍ້ອນຄວາມຮັກ, ພຣະອົງໄດ້ສ້າງພັນທະສັນຍາກັບອາດາມ ແລະ ສັນຍາວ່າຈະອວຍພຣະພອນເຊື້ອສາຍຂອງລາວ (ປຖມກ 26:4)



ຍ້ອນຄວາມຮັກ, ພຣະອົງໄດ້ມອບບຸດຂອງພຣະອົງ–ພຣະເຢຊູຄຣິດ–ເພື່ອເສຍສະຫລະຕົນເອງສໍາລັບຄວາມບາບຂອງພວກເຮົາ (ຢຮ 3:16)



ແລ້ວ ພວກເຮົາຈະຕອບສະໜອງຕໍ່ຄວາມຮັກຂອງພຣະອົງແບບໃດດີ?
"ຝ່າຍເຮົາທັງຫລາຍໄດ້ຮັກ ເພາະພຣະອົງຊົງຮັກພວກເຮົາກ່ອນ" (1 ຢຮ 4:19).

# ການຮູ້ຈັກກັບພຣະເຈົ້າ

# ພຣະເຈົ້າຊົງເປີດເຜີຍຜ່ານການຊົງສ້າງ



"ຟ້າສະຫວັນໄດ້ເປີດເຜີຍສະຫງ່າຣາສີຂອງພຣະເຈົ້າ ຊີ້ໃຫ້ເຫັນຊັດເຈນສິ່ງທີ່ໄດ້ຊົງກະທຳນັ້ນ" (ເພງສັນລະເສີນ 19:1)

ພຣະຄຳພີເລີ່ມຕົ້ນໂດຍອ້າງອີງເຖິງພຣະເຈົ້າໃນຖານະພຣະເຈົ້າ **אֱלֹהִים** (*elohim*). ເຖິງວ່າຕາມຕົວອັກສອນໂດຍທົ່ວໄປແລ້ວຈະເປວ່າ ພຣະເຈົ້າຫລາຍອົງ "gods," ແຕ່ກໍ່ຖືກໃຊ້ໃນຮູບແບບຈຳນວນໜ້ອຍ. ເຊັ່ນ: "ເມື່ອພຣະເຈົ້າຕັ້ງຕົ້ນນິຣະມິດສ້າງຈັກກະວານ" (ປຖມກ 1:1).



ເຊິ່ງສະແດງໃຫ້ພວກເຮົາເຫັນໂດຍພຣະຜູ້ສ້າງ, ຜ່ານທາງພຣະເຢຊູ ແລະ ການຊົງນຳໂດຍພຣະວິນຍານບໍຣິສຸດ, ເຊິ່ງຊົງພະລັງຫລາຍທີ່ຈະເຮັດໃຫ້ທຸກສິ່ງໄດ້ກະຈ່າງແຈ້ງຂຶ້ນ (ປຖມກ 1:1-3; ຢຮ 1:1-3).

ໃນ ປຖມກ ບົດທີ 2, ຊື່ທີ່ເປັນເຈາະຈົງຂອງພຣະເຈົ້າໄດ້ຖືກກ່າວເຖິງຄື: "ຢາເວ" **יְהוָה** (*Yahweh*). ຕອນນີ້ພຣະອົງບໍ່ໄດ້ກ່າວວ່າ, "ຈົ່ງໃຫ້ເປັນດັ່ງນັ້ນ" ພຣະອົງຊົງປັ້ນມະນຸດດ້ວຍມືຂອງພຣະອົງເອງ ພຣະເຈົ້າຜູ້ຊົງພະລັງໄດ້ເປີດເຜີຍພຣະອົງເອງ, ເປັນພຣະເຈົ້າທີ່ພວກເຮົາສາມາດເຂົ້າຫາພຣະອົງໄດ້.

ພຣະອົງຊົງສຳຜັດພວກເຮົາ, ພຣະອົງເວົ້າກັບພວກເຮົາ, ພຣະອົງຊົງສອນພວກເຮົາ, ພຣະອົງມອບວຽກໃຫ້ພວກເຮົາເຮັດ... ພຣະອົງຮັກພວກເຮົາ.

# ພຣະອົງຊົງເປີດເຜີຍຜ່ານທາງພຣະເຢຊູ (ເອມານູເອນ)

"ບໍ່ມີຜູ້ໃດໄດ້ເຫັນພຣະເຈົ້າຈັກເທື່ອ, ແຕ່ພຣະບຸດອົງດຽວທີ່ເປັນພຣະເຈົ້າ ຊຶ່ງຢູ່ໃນຊວງເອິກຂອງພຣະບິດາເຈົ້າ ພຣະອົງນັ້ນແຫຼະ ໄດ້ເຮັດໃຫ້ພວກເຮົາຮູ້ຈັກພຣະເຈົ້າ." ໂຢຮັນ 1:18



ຖ້າວ່າພວກເຮົາຕ້ອງການຮູ້ວ່າພຣະເຈົ້າມີລັກສະນະແບບໃດ, ຈົ່ງໃຫ້ພວກເຮົາຮູ້ຈັກກັບພຣະເຢຊູ. ພຣະອົງຊົງເປັນພຣະເຈົ້າຜູ້ມາບັງເກີດເປັນມະນຸດ (ຢຮ 1:14), ຜູ້ທີ່ເປີດເຜີຍພຣະອົງເອງໂດຍເກີດຕາມທຳມະຊາດຂອງມະນຸດ ເພື່ອວ່າມະນຸດຈະໄດ້ເຫັນພຣະອົງ (ຢຮ 1:18; 14:9; 1 ຢຮ 5:20).

ພຣະອົງຊົງໄດ້ຖືກປະກາດຊື່ໂດຍທາງຜູ້ເຜີຍພຣະວັດຈະນະໂດຍພຣະນາມ: ເອມານູເອນ, ພຣະເຈົ້າສະຖິດຢູ່ກັບເຮົາທັງຫລາຍ (ອຊຢ 7:14; ມທ 1:23). ຜູ້ປະກາດພຣະຄຳທັງ 4 ໄດ້ບອກພວກເຮົາກ່ຽວກັບພຣະເຈົ້າໃນຮູບແບບທີ່ແຕກຕ່າງກັນ



| | | |
|---|---|---|
| ທ່ານ ມັດທາຍ | ຈາກຄົນຢິວໜຶ່ງຄົນ ສູ່ຄົນຢິວຫລາຍຄົນ | ພຣະອົງແມ່ນພຣະເມຊີອາ ເຊິ່ງເປັນໄປຕາມຄຳທຳນວາຍ |
| ທ່ານ ມາຣະໂກ | ຈາກຄົນຢິວ ຢູ່ຄົນຕ່າງຊາດ | ພຣະອົງເອົາໃຈໃສ່ຕໍ່ການຮັບໃຊ້ຕະຫລອດ |
| ທ່ານ ລູກາ | ຈາກຄົນຕ່າງຊາດ ສູ່ຄົນຕ່າງຊາດ | ພຣະອົງມີຄວາມເມດຕາ ແລະ ມະນຸດສະທຳ |
| ທ່ານ ໂຢຮັນ | ຈາກຄົນຢິວ ສູ່ຄົນຢິວ ແລະ ສູ່ຄົນຕ່າງຊາດ | ພຣະອົງເປັນຜູ້ໃຫ້ຊີວິດ ແລະ ຈິດວິນຍານ |

“ຄົນຈຳນວນຫລວງຫລາຍມີຄວາມເຂົ້າໃຈຜິດພັ້ງນກ່ຽວກັບພຣະເຈົ້າ ແລະ ພຣະ
ລັກສະນະຂອງພຣະອົງ... ພຣະເຈົ້າຊົງເປັນພຣະເຈົ້າແຫ່ງຄວາມຈິງ, ຄວາມຍຸຕິທຳ.
ຄວາມເມດຕາເປັນຮາກຖານແຫ່ງພຣະບັນລັງຂອງພຣະອົງ, ພຣະອົງຊົງເປັນພຣະເຈົ້າ
ແຫ່ງຄວາມຮັກ, ຄວາມສົງສານ, ແລະ ພຣະກະຣຸນາອັນອ່ອນໂຍນ ດັ່ງທີ່ພຣະອົງຊົງ
ສຳແດງຜ່ານທາງພຣະບຸດຂອງພຣະອົງ ຜູ້ຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ,
ພຣະອົງຊົງເປັນພຣະເຈົ້າແຫ່ງຄວາມອົດທົນ ແລະ ອົດກັ້ນພະໄທໄວ້ດົນນານ.
ຖ້າວ່າພຣະອົງຊົງເປັນຜູ້ທີ່ພວກເຮົາກຳລັງເທີດທູນບູຊາ, ນະມັດສະການແລ້ວ ພວກ
ເຮົາກຳລັງນະມັດສະການພຣະເຈົ້າຜູ້ແທ້ຈິງ ”

EGW (God Cares for Us, August 8)